ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1334 /ກປ

ນະຄອນຫຼວງວຽງຈັນ, ວັນທີ 19 OCT 2021

# ຂໍ້ຕົກລົງ

## ວ່າດ້ວຍ ການກຳນົດບັນຊີ ພືດ ແລະ ຜະລິດຕະພັນພືດ ທີ່ເປັນບຸລິມະສິດ ສຳລັບເຈລະຈາເຕັກນິກເປີດຕະຫລາດ ເພື່ອສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ

- ອີງຕາມກົດໝາຍວ່າດ້ວຍ ການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ), ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 1778/ກປຝ, ລົງວັນທີ 13 ຕຸລາ 2021.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

**ມາດຕາ 1** ເຫັນດີໃຫ້ກຳນົດບັນຊີ ພືດ ແລະ ຜະລິດຕະພັນພືດ ທີ່ເປັນບຸລິມະສິດ ສຳລັບເຈລະຈາເຕັກນິກເປີດຕະຫຼາດ ເພື່ອສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ ຕາມເອກະສານ ຊ້ອນທ້າຍ 1 ທີ່ຕິດຄັດມາພ້ອມນີ້.

**ມາດຕາ 2** ມອບໃຫ້ ກົມປູກຝັງເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ ພ້ອມທັງ ແຈ້ງໃຫ້ອົງການປ້ອງກັນພືດແຫ່ງຊາດ (NPPO) ແລະ ອົງການຄຸ້ມຄອງບໍລິຫານພາສີ ແຫ່ງ ສປ ຈີນ ກ່ຽວກັບບັນຊີພືດ ແລະ ຜະລິດຕະພັນພືດ ດັ່ງກ່າວ ລວມທັງ ອອກບົດແນະນຳ ແລະ ຄູ່ມືວິຊາການ ກ່ຽວກັບ ຫຼັກການ, ວິທີການ ແລະ ຂັ້ນຕອນ ຈັດຕັ້ງປະຕິບັດລະອຽດ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0705/ກປ, ລົງວັນທີ 10 ມິຖຸນາ 2021.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

**ປອ. ເພັດ ພົມພິພັກ**

ບ່ອນນຳສົ່ງ:

1. ທ່ານລັດຖະມົນຕີ, ຮອງລັດຖະມົນຕີກະຊວງ ກປ ທ່ານລະ 01 ສະບັບ
2. ກະຊວງການຕ່າງປະເທດ 01 ສະບັບ
3. ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ
4. ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
5. ຄະນະກຳມະການຮ່ວມມື ລາວ-ຈີນ 01 ສະບັບ
6. ຫ້ອງການ, ກົມ, ກອງ ແລະ ສະຖາບັນອ້ອມຂ້າງ ກປ ບ່ອນລະ 01 ສະບັບ
7. ພະແນກ ກປ ແຂວງ ແລະ ນະຄອນຫຼວງ ບ່ອນລະ 01 ສະບັບ
8. ຂະແໜງປູກຝັງແຂວງ ແລະ ນະຄອນຫຼວງ ບ່ອນລະ 01 ສະບັບ
9. ກັບມ້ຽນ 01 ສະບັບ

ເອກະສານຊ້ອນທ້າຍ 1

## ບັນຊີ ພືດ ແລະ ຜະລິດຕະພັນພືດ ທີ່ກຳນົດເປັນ ບຸລິມະສິດ ສຳລັບເຈລະຈາເຕັກນິກເປີດຕະຫຼາດ ເພື່ອສົ່ງອອກຈາກ ສປປ ລາວ ໄປ ຍັງ ສປ ຈີນ

**(Priority Plants, Plant Products and Regulated Article for Technical Market Access for Export from Lao PDR to PR China)**

| ລ/ດ | ຊື່ພາສາລາວ (Lao Name) | ຊື່ວິທະຍາສາດ (Scientific Names) | ຊື່ພາສາອັງກິດ (Common Names) |
|---|---|---|---|
| I. | ປະເພດໝາກໄມ້ສົດຕ່າງໆ (Fruits) | | |
| 1 | ໝາກນັດ | *Ananas comosus* (L) Merr. | Pineapple |
| 2 | ໝາກຂຽບຝຣັ່ງ | *Annona muricata* L. | Prickly custard apple |
| 3 | ໝາກຂຽບ | *Annonas squamosa* L. | Sugar apple |
| 4 | ໝາກຕາວ | *Arenga pinnata* (W) | Sugar palm fruit |
| 5 | ໝາກມີ້ | *Artocarpus* spp. | Jack fruit |
| 6 | ໝາກເຟືອງ | *Averrhoa carambola* L. | Star fruit |
| 7 | ໝາກໄຟ | *Baccaurea ramiflora* Lour. | Burmese grape |
| 8 | ໝາກຟຸງ, ຝາງ | *Bouea* spp. | Sweet and sour marian plum |
| 9 | ໝາກຫຸ່ງ | *Carica* spp. | Papaya |
| 10 | ໝາກນ້ຳນົມ | *Chrysophyllum* spp. | Star apple |
| 11 | ຕະກູນໝາກກ້ຽງ (ໝາກກ້ຽງ, ໝາກພຸກ, ໝາກນາວ, ໝາກຂີ້ຫູດ) | *Citrus* spp. | Orange, mandarin, pomelo, lemon, lime, bergamot |
| 12 | ໝາກພ້າວ | *Cocos nucifera* L. | Coconut |
| 13 | ໝາກແຕງຫອມ (ແຕງລາຍ, ແຄນຕາລຸບ,...) | *Cucumis melon* L. | Melon (cantaloupe, rock melon) |
| 14 | ໝາກລຳໄຍ | *Dimocarput longan* Lour. | Longan |
| 15 | ໝາກທຸ່ລຽນ | *Durio zibethinus* L. | Durian |
| 16 | ໝາກຈຽງ | *Eugenia* spp. | Rose apple |
| 17 | ໝາກສະຕໍເບີລີ້ | *Fragaria ananassa* L. | Strawberries |
| 18 | ໝາກມັງຄຸດ | *Garcinia mangostana* L. | Mangosteen |
| 19 | ໝາກມັງກອນ | *Hylocereus* spp. | Dragon fruit/Pitaya |

| | | | |
|---|---|---|---|
| 20 | ໝາກລອງກ່ອງ | *Lansium domesticum* Correa. | Langsat |
| 21 | ໝາກລິນຈີ່ | *Litchi chinensis* Sonn. | Lychee |
| 22 | ໝາກມ່ວງ | *Mangifera indica* L. | Mango |
| 23 | ໝາກລະມຸດ | *Manilkara zapota* L. | Sapodilla |
| 24 | ໝາກມອນ | *Morus nigra* L. | Mulberry |
| 25 | ໝາກເງາະ | *Nephelium lappaceum* L. | Rambutan |
| 26 | ໝາກອາໂວຄາໂດ້ | *Persea americana* L. | Avocado |
| 27 | ໝາກຂາມປ້ອມ | *Phyllanthus emblica* L. | Emblica |
| 28 | ໝາກມອນໄຂ່ | *Pouteria* spp. | Egg fruit |
| 29 | ໝາກສີດາ | *Psidium guajava* L. | Guava |
| 30 | ໝາກພິລາ | *Punica granatum* L. | Pomegranate |
| 31 | ໝາກສາລີ້ | *Pyrus pyrifolia* (Burm. f.) Nakai. | Chinese pear |
| 32 | ລັດສະເບີລີ້ | *Rubus* spp. | Blackberry |
| 33 | ໝາກຕ້ອງ | *Sandoricum koetjape* (Barm.f) Merr. | Santol |
| 34 | ໝາກຂາມ | *Tamarindus indica* L. | Tamarind |
| 35 | ບູເບີລີ້ | *Vaccinium corymbosum* L. | Blueberry |
| 36 | ໝາກລະແຊງ (ໝາກອາງຸ່ນ) | *Vitis vinifera* L. | Grape |
| 37 | ໝາກກະທັນ | *Ziziphus mauritiana* Lam. | Jujube |
| **II.** | **ປະເພດພືດຜັກສີດຕ່າງໆ (Vegetables)** | | |
| 38 | ຜັກບົ່ວໃບ | *Allium cepa* L. | Onion |
| 39 | ຜັກກະທຽມ | *Allium sativum* L. | Garlic |
| 40 | ຜັກສະນາລີ້ | *Apium graveolens* L. | Celery |
| 41 | ໜໍ່ໄມ້ຝຣັ່ງ | *Asparagus officinalis* L. | Asparagus |
| 42 | ຜັກກະເດົາ | *Azadirachta indica* A.juss | Neem |
| 43 | ໝາກໂຕ່ນ | *Benincase hispida* (Thunb).cogn | Wax gourd |
| 44 | ຜັກຕະກຸນກະລໍ່າ | *Brassica* spp. | Cabbage, broccoli,... |
| 45 | ໝາກເຜັດ ( ໝາກເຜັດຍອກ, ໝາກເຜັດນ້ອຍ,....) | *Capsicum* spp. | Chilli, sweet paper,... |
| 46 | ຜັກຊີ | *Anethum graveolens* L. | Dill |

| | | | |
|---|---|---|---|
| 47 | ຫອມປ້ອມ | *Coriandrum sativum* L. | Coriander |
| 48 | ໝາກແຕງ | *Cucumis sativas* L. | Cucumber |
| 49 | ໝາກອຶ | *Cucurbita* spp. | Pumbkin |
| 50 | ຫອມເປ | *Eryngium foetidum* L. | Long coriander |
| 51 | ຜັກບົ້ງ | *Ipomoea aquatica* Forssk | Water spinach |
| 52 | ໝາກນໍ້າ | *Lagenaria siceraria* L. | Calabash |
| 53 | ໝາກບວບ, ໝາກນອຍ | *Luffa* spp. | Sponge gourd, angled gourd |
| 54 | ຜັກຫອມລາບ | *Mentha spicata* L. | Mint |
| 55 | ຜັກບົວລະພາ | *Ocimum basilicum* L. | Sweet basil |
| 56 | ໝາກເລັ່ນ | *Solanum lycopersicum* L. | Tomato |
| 57 | ໝາກເຂືອ | *Solanum melongena* L. | Egg plant |
| 58 | ໝາກງຶ່ງວ | *Trichosanthes cucumerina* L. | Snake gourd |
| **III.** | **ປະເພດພືດຕະກຸນຖົ່ວ (Beans)** | | |
| 59 | ໝາກຖົ່ວດິນ | *Arachis hypogaea* L. | Peanut |
| **IV.** | **ປະເພດພືດຫົວ (Root crops)** | | |
| 60 | ເຜືອກ | *Colocasia esculenta* L. | Taro |
| 61 | ຫົວກະລົດ | *Daucus carota* L. | Carrot |
| 62 | ໝາກແຫ້ວ | *Eleocharis dulcis* L. | Water chestnut |
| 63 | ມັນຝຣັ່ງ | *Solanum tuberosum* L. | Potato |
| 64 | ໝາກຈັບ | *Trapa natans* L. | Water caltrop |
| **IV.** | **ປະເພດພືດເສດຖະກິດອື່ນ (Other cash crops)** | | |
| 65 | ໝາກມ່ວງຫີມະພານ | *Anacardium occidentale* L. | Cashew nut |
| 66 | ປາມປະດັບ | *Areca* spp. | Palms |
| 67 | ປໍສາ | *Broussonetia papyrifera* (L.) | Paper mulberry |
| 68 | ຊາ | *Camellia* spp. | Tea |
| 69 | ກາເຟ | *Coffea* spp. | Coffee |
| 70 | ໝາກເດືອຍ | *Coix* spp. | Job's tears |
| 71 | ຝ້າຍ | *Gossypium* spp. | Cotton |

| | | | |
|---|---|---|---|
| 72 | ຢາງພາລາ | *Hevea* spp. | Rubber |
| 73 | ມອນ | *Morus* spp. | Mulberry |
| 74 | ຢາສູບ | *Nicotiana tabacum* L. | Tobacco |
| 75 | ອ້ອຍ | *Saccharum officinarum* L. | Sugarcane |
| 76 | ໝາກງາ | *Sesamum indicum* L. | Sesame |
| 77 | ເຂົ້າຟ່າງ | *Sorghum bicolor* L | Sorgham |
| 78 | ໝາກເກົ້າ | *Vernicia montana* Lour. | Mu oil tree |
| **V. ປະເພດພືດເປັນຢາສະໝູນໄພ (Herbal Plants)** | | | |
| 79 | ໝາກຕູມ | *Aegle marmelos* L. | Bael fruit |
| 80 | ໝາກແໜ່ງ | *Amomum* spp. | Cardamom |
| 81 | ຫົວດຸກເດື່ອ | *Amorphophallus* spp. | Elephant yam |
| 82 | ຫົວກູດ | *Helminthostachys zeylanica* (L.) | Flowering fern |
| 83 | ຂິງແດງປາກັ້ງ | *Homalomena occulta* (Lour) | Homalomena |
| 84 | ໝາກໂປ່ງເປ່ງ | *Physalis angulata* (L.) | Balloon cherry |
| 85 | ພິກໄທ | *Piper nigrum* L. | Pepper |
| 86 | ເຄືອແດງດ່ານ | *Sargentadoxa cuneata* (Oliv.) | - |
| 87 | ຂິງ | *Zingiber officinale*. Roscoe | Ginger |
| **VII. ປະເພດພືດອື່ນໆຕາມການສະເໜີ (Other plants)** | | | |

**ໝາຍເຫດ:** ບັນຊີສະບັບນີ້ ຈະມີການປັບປຸງແຕ່ລະໄລຍະ.